## ກົນໄກການພິຈາລະນາກວດຜ່ານ, ຕິດຕາມ, ກວດກາ, ປະເມີນຜົນຫົວຂໍ້ຄົ້ນຄວ້າ, ໂຄງການຄົ້ນຄ້ວາ




## ການຮ່ວມມື

ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ເປີດກວ້າງການຮ່ວມມືກັບບັນດາຂະແໜງການຄົ້ນຄວ້າວິທະຍາສາດ ທັງພາຍໃນ ແລະ ຕ່າງປະເທດ, ອົງການຈັດຕັ້ງສາກົນ ທີ່ເຄື່ອນໄຫວເຮັດວຽກກ່ຽວກັບການຄົ້ນຄວ້າວິທະຍາສາດ. ພັດທະນາເຕັກໂນໂລຊີ ແລະ ນະວັດຕະກຳ. ເພື່ອຊຸກຍູ້ສົ່ງເສີມ, ສ້າງຂອບການຮ່ວມມື, ແລກປ່ຽນການສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງຄົ້ນຄວ້າວິທະຍາສາດ ແນໃສ່ຍົກລະດັບຄຸນນະພາບການຄົ້ນຄວ້າວິທະຍາສາດແຫ່ງຊາດ ໃຫ້ໄດ້ມາດຕະຖານສາກົນເທື່ອລະກ້າວ, ຄຽງຄູ່ກັບການສ້າງຄວາມເຂັ້ມແຂງໃນການຍາດແຍ່ງທຶນຮອນເພື່ອເພີ່ມຂະໜາດແຫຼ່ງທຶນກອງທຶນພັດທະນາວິທະຍາສາດແລະ ເຕັກໂນໂລຊີ ໃຫ້ເຕີບໂຕ ແລະ ມີຄວາມຍືນຍົງ ສາມາດຕອບສະໜອງທຶນໄດ້ຢ່າງພຽງພໍ.

## ທີ່ຢູ່ ຫ້ອງການກອງເລຂາ ກພວຕ


ຕັ້ງຢູ່ໃນເຂດສຳນັກງານນາຍົກລັດຖະມົນຕີ (ຊັ້ນ1 ຕຶກ100)

ຖະໜົນ ນາໄຮ່ດຽວ,
ບ້ານ: ສີດຳດວນ,
ເມືອງ ຈັນທະບູລີ,
ນະຄອນຫຼວງວຽງຈັນ.

ໂທລະສັບ/ແຟັກ: 021 243311

Website: http://laofostd.gov.la

Email: stdflao@gmail.com


QR Code ບັນດາເອກະສານນິຕິກຳ ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ

# ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ

## (ກພວຕ)

## Science and Technology Development Fund

## (STDF)

2025

## ວິໄສທັດ

ຄຸ້ມຄອງສົ່ງເສີມການຄົ້ນຄວ້າວິທະຍາສາດ ເພື່ອການພັດທະນາເສດຖະກິດ-ສັງຄົມ.

## ພາລະກິດ

1. ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ ທັນເປັນອຸດສະຫະກຳ ແລະ ທັນສະໄໝເທື່ອລະກ້າວ;
2. ການພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວ ແລະ ຍືນຍົງ;
3. ສ້າງຄວາມເຂັ້ມແຂງການຄົ້ນຄວ້າວິທະຍາສາດ;
4. ສ້າງຖານຂໍ້ມູນເຄືອຂ່າຍການຄົ້ນຄວ້າວິທະຍາສາດ;
5. ສົ່ງເສີມການຄົ້ນຄວ້າວິທະຍາສາດ, ສ້າງຜະລິດຕະພັນພາຍໃນ ເພື່ອຫຼຸດຜ່ອນການນຳເຂົ້າ;
6. ສ້າງເຄື່ອງມືດ້ານນິຕິກຳ ສະໜັບສະໜູນການຄົ້ນຄວ້າວິທະຍາສາດ;
7. ສ້າງ, ພັດທະນາ ກພວຕ ໃຫ້ມີຄວາມເຂັ້ມແຂງ, ໂປ່ງໃສ, ຍືນຍົງ ແລະ ໜ້າເຊື່ອຖື;
8. ເພີ່ມທະວີການຮ່ວມມື, ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

## ສະພາບລວມ

ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ຖືກສ້າງຕັ້ງຂຶ້ນໃນປີ 2014 ເປັນກອງທຶນຂອງລັດຖະບານແຫ່ງ ສປປ ລາວ. ໂຄງປະກອບການຈັດຕັ້ງມີ: ຄະນະສະພາບໍລິຫານ, ຄະນະກຳມະການວິຊາການ, ຄະນະກອງເລຂາ ແລະ ໜ່ວຍງານຊ່ວຍວຽກ ກພວຕ, ທີ່ມາຈາກຫຼາຍຂະແໜງການທີ່ກ່ຽວຂ້ອງ ໂດຍມີ ຫ້ອງການສະພາວິທະຍາສາດແຫ່ງຊາດ ເປັນກອງເລຂາກອງທຶນ.

ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ການສະໜັບສະໜູນສຳລັບການຄົ້ນຄວ້າວິທະຍາສາດທຳມະຊາດ, ວິທະຍາສາດສັງຄົມ ແລະ ສ້າງຄວາມເຂັ້ມແຂງດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ; ກອງທຶນເປີດຮັບສະໝັກຫົວຂໍ້ຄົ້ນຄວ້າ 2 ຄັ້ງຕໍ່ປີ.

## ສະພາບໍລິຫານກອງທຶນ

ສະພາບໍລິຫານກອງທຶນ ປະກອບມີຄະນະ ດັ່ງນີ້:

1. ປະທານ ຈຳນວນ 01 ທ່ານ;
2. ຮອງປະທານ ຈຳນວນ 02 ທ່ານ;
3. ຄະນະກຳມະການ ຈຳນວນ 08 ທ່ານ.

## ຄະນະກຳມະການວິຊາການ

ຄະນະກຳມະການວິຊາການ ກອງທຶນ ປະກອບມີ ດັ່ງນີ້:

1. ຄະນະກຳມະການກັ່ນກອງຫົວຂໍ້ຄົ້ນຄວ້າເບື້ອງຕົ້ນ;
2. ຄະນະກຳມະການວິຊາການກວດຜ່ານຄັດເລືອກຫົວຂໍ້ຄົ້ນຄວ້າ;
3. ຄະນະກຳມະການວິຊາການ ການເງິນ;
4. ຄະນະກຳມະການວິຊາການ ຕິດຕາມ, ກວດກາ ແລະ ປະເມີນຜົນຫົວຂໍ້ຄົ້ນຄວ້າ.

## ກອງເລຂາກອງທຶນ

ກອງເລຂາ ກອງທຶນ ປະກອບມີ:

1. ຫົວໜ້າກອງເລຂາ ຈຳນວນ 01 ທ່ານ;
2. ຮອງຫົວໜ້າ ກອງເລຂາ ຈຳນວນ 02 ທ່ານ;
3. ຄະນະ ກອງເລຂາ ຈຳນວນ 04 ທ່ານ.

## ໜ່ວຍງານຊ່ວຍວຽກ

ໜ່ວຍງານຊ່ວຍວຽກ ປະກອບມີ:

1. ໜ່ວຍງານ ບໍລິຫານ ແລະ ຄົ້ນຄວ້າ-ສັງລວມ;
2. ໜ່ວຍງານ ປະສານງານວິທະຍາສາດ;
3. ໜ່ວຍງານ ຄຸ້ມຄອງກອງທຶນ;
4. ໜ່ວຍງານ ສົ່ງເສີມການຄົ້ນຄວ້າ;
5. ໜ່ວຍງານ ຕິດຕາມ, ກວດກາ ແລະ ປະເມີນຜົນ.

## ການສະໜັບສະໜູນທຶນ

1. ການຄົ້ນຄວ້າວິທະຍາສາດພື້ນຖານ ແລະ ວິທະຍາສາດນຳໃຊ້;
2. ສ້າງຄວາມເຂັ້ມແຂງດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ;
3. ສະໜັບສະໜູນກິດຈະກຳ ຍົກສູງຄວາມອາດສາມາດດ້ານວິທະຍາສາດ.

## ການເປີດຮັບສະໝັກ ແລະ ອະນຸມັດຫົວຂໍ້ຄົ້ນຄວ້າ

ເປີດຮັບສະໝັກ ແລະ ອະນຸມັດຫົວຂໍ້ຄົ້ນຄວ້າ ດັ່ງນີ້:

- ງວດທີ I ເລີ່ມແຕ່: ເດືອນມັງກອນ ຫາ ເດືອນ ມິຖຸນາ;
- ງວດທີ II ເລີ່ມແຕ່: ເດືອນກໍລະກົດ ຫາ ເດືອນ ທັນວາ.

## ເງື່ອນໄຂການສະໝັກຫົວຂໍ້ຄົ້ນຄວ້າ

1. ເງື່ອນໄຂຂອງນັກຄົ້ນຄວ້າ
   - ຫົວໜ້າຫົວຂໍ້ແມ່ນລະດັບປະລິນຍາເອກ ທີ່ລົງທະບຽນ ໃນຖານຂໍ້ມູນນັກຄົ້ນຄວ້າ;
   - ມີຜົນງານເຮັດການຄົ້ນຄວ້າວິທະຍາສາດທີໄດ້ຕີພິມລົງ ວາລະສານທັງພາຍໃນ ແລະ ສາກົນ;
2. ການປະກອບເອກະສານສະເໜີຫົວຂໍ້ຄົ້ນຄວ້າ
   - ບົດລົງທະບຽນຫົວຂໍ້ຄົ້ນຄວ້າ(Concept Note) ພື້ນຖານ ແລະ ນຳໃຊ້;
   - ບົດສະເໜີຫົວຂໍ້ຄົ້ນຄວ້າສະບັບສົມບູນ (Full Project) ພື້ນຖານ ແລະ ນຳໃຊ້;
   - ຊີວະປະຫວັດຂອງຫົວໜ້າຫົວຂໍ້ຄົ້ນຄວ້າ ແລະ ທີມງານທັງໝົດ;
   - ເອກະສານຢັ້ງຢືນວຸດທິການສຶກສາ.